UC DAVIS HEALTH

# ສັງລວມຫຍໍ້ໂຄງການຊ່ວຍເຫຼືອດ້ານການເງິນ ເຊິ່ງເປັນພາສາທີ່ເຂົ້າໃຈງ່າຍ

ອະທິບາຍລວມ: ສູນໃຫ້ບໍລິການສຸຂະພາບ Davis ຂອງ UC (UC Davis Health) ຈັດຫາການດູແລຄົນເຈັບດ້ວຍຄຸນນະພາບ ແລະ ໄດ້ມາດຕະຖານສູງສໍາລັບຊຸມຊົນທີ່ພວກເຮົາບໍລິການ. ນະໂຍບາຍນີ້ ສະແດງໃຫ້ເຫັນຄວາມຮັບຜິດຊອບຂອງ UC Davis Health ຕໍ່ພາລະໜ້າທີ່ ແລະ ວິໄສທັດຂອງພວກເຮົາ ໂດຍການຊ່ວຍໃຫ້ຄົນເຈັບທີ່ມີລາຍໄດ້ຕໍ່າ, ບໍ່ມີປະກັນໄພ ແລະ ມີປະກັນໄພຂັ້ນຕໍ່າໃນຊຸມຊົນຂອງພວກເຮົາ.

**ໂຄງການຊ່ວຍເຫຼືອດ້ານການເງິນຂອງ UCDH (ມູນນິທິດູແລສຸຂະພາບ - Charity Care)**

ໂຄງການຊ່ວຍເຫຼືອດ້ານການເງິນ (Financial Assistance Program), ເອີ້ນອີກຢ່າງໜຶ່ງວ່າ (ມູນນິທິດູແລສຸຂະພາບ - Charity Care), ໄດ້ຖືກອອກແບບມາເພື່ອຊ່ວຍໃຫ້ຄົນເຈັບທີ່ມີລາຍໄດ້ຕໍ່າ, ບໍ່ມີປະກັນໄພ ແລະ ມີປະກັນໄພຂັ້ນຕໍ່າ ສາມາດໄດ້ຮັບການດູແລສຸຂະພາບທີ່ເໝາະສົມໃນຊຸມຊົນ ຂອງພວກເຮົາ.

**ການບໍລິການທີ່ໄດ້ຮັບສິດ** – ໂຄງການຊ່ວຍເຫຼືອດ້ານ ການເງິນ ນໍາໃຊ້ໃນກໍລະນີສຸກເສີນ ຫຼື ບໍລິການດູແລສຸຂະ ພາບທີ່ຈໍາເປັນດ້ານການແພດອື່ນໆ ທີ່ຈັດຫາໃຫ້ ແລະອອກໃບບິນໂດຍ UC Davis Health. ການບໍລິການທີ່ ອອກໃບບິນແຍກຕ່າງຫາກ ໂດຍໜ່ວຍງານອື່ນ/ຜູ້ຈັດຫາທີ່ບໍ່ແມ່ນ UC Davis Health ບໍ່ສາມາດໄດ້ຮັບສິດສໍາລັບການ ພິຈາລະນາພາຍໃຕ້ໂຄງການ ຊ່ວຍເຫຼືອດ້ານການເງິນ (Financial Assistance Program).

**ການພິຈາລະນາສິດ** – ສິດ ໄດ້ຖືກພິຈາລະນາບົນພື້ນຖານຂອງການທົບທວນ ແບບຟອມກວດກາເບື້ອງຕົ້ນດ້ານ ການເງິນ (Financial Screening Form) ແລະ ເອກະສານເພີ່ມເຕີມ, ລວມທັງຫຼັກຖານຢັ້ງຢືນລາຍໄດ້, ຊັບສິນ ແລະ ໜີ້ສິນ. ໂດຍທົ່ວ ໄປແລ້ວ, ຄົນເຈັບທີ່ມີລາຍໄດ້ຂອງຄອບຄົວຢູ່ທີ່ ຫຼື ຕໍ່າກວ່າ 400% ຂອງລະດັບຄວາມທຸກຍາກຂອງຣັຖບານກາງ (Federal Poverty Level) ຈະໄດ້ຮັບສິດສ່ວນຫຼຸດ 100%. ຖ້າທ່ານໄດ້ ຮັບການຊ່ວຍເຫຼືອດ້ານການເງິນພາຍໃຕ້ນະໂຍບາຍຂອງພວກ ເຮົາ, ທ່ານຈະບໍ່ຖືກເກັບເພີ່ມຄ່າບໍລິການເຫດການ ສຸກເສີນ ຫຼື ການດູແລທີ່ຈໍາເປັນດ້ານສຸຂະພາບອື່ນໆທີ່ແພງກວ່າຈໍານວນເງິນ ທີ່ຢູ່ໃນໃບບິນ (AGB) ສໍາລັບຄົນເຈັບທີ່ກໍາລັງໄດ້ຮັບການຄຸ້ມຄອງ ຂອງເມດິແຄ (Medicare).

**ຈະເອົາສໍາເນົາກ່ຽວກັບນະໂຍບາຍ ແລະ ການສະໝັກຂໍໂຄງການຊ່ວຍເຫຼືອດ້ານການເງິນໄດ້ແນວໃດ**

ທ່ານສາມາດຮັບເອົາສໍາເນົາກ່ຽວກັບນະໂຍບາຍ ແລະ ການສະໝັກຂໍໂຄງການຊ່ວຍເຫຼືອດ້ານການເງິນ ຂອງພວກເຮົາໄດ້ທີ່:

- ເວັບໄຊທ໌ຂອງ UC Davis Health ທີ່ https://health.ucdavis.edu/medicalcenter/patients/financial-assistance.html
- ໃນພະແນກສຸກເສີນຂອງພວກເຮົາ, ພະແນກສະຫງດ້ານການເງິນ (ກະລຸນາເບິ່ງທີ່ຢູ່ລຸ່ມນີ້), ຢູ່ສູນບໍລິການຂອງ UC Davis Health ໃດໜຶ່ງທີ່ມີການລົງທະບຽນ ຂອງຄົນເຈັບ ແລະ ໃນຫ້ອງການບໍລິການລູກຄ້າໃນການອອກໃບບິນໃຫ້ຄົນເຈັບ (Patient Billing Customer Service) (ກະລຸນາເບິ່ງທີ່ຢູ່ລຸ່ມນີ້).
- ຕ້ອງການເອກະສານທາງໄປສະນີ ຈົ່ງຕິດຕໍ່ຫາຫ້ອງການບໍລິການລູກຄ້າ (Customer Service Department) ທີ່ໝາຍເລກ 916-734-9200 ຫຼື 1-800-551-9411 (ວັນຈັນຫາວັນສຸກ, 8:30 ເຊົ້າ ຫາ 4:00 ແລງ).

**ພາສາ/ແປພາສາ**

ນະໂຍບາຍຂອງໂຄງການຊ່ວຍເຫຼືອດ້ານການເງິນ, ໃບສະໝັກຂອງໂຄງການ (ເອີ້ນວ່າ "ແບບຟອມຂໍ້ມູນດ້ານການເງິນຂອງຄົນເຈັບ"), ແລະ ສັງລວມພາສາທີ່ເຂົ້າໃຈງ່າຍຂອງໂຄງການ ທີ່ເປັນພາສາອັງກິດ, ສະເປນ, ມົ້ງ, ຈີນ, ລາວ ແລະ ຣັດເຊຍ ຕາມຕ້ອງການ.

## ວິທີສະໝັກຂໍໂຄງການຊ່ວຍເຫຼືອດ້ານການເງິນຂອງພວກເຮົາ

ໃບສະໝັກຂໍການຊ່ວຍເຫຼືອດ້ານການເງິນທີ່ສົມບູນ ພ້ອມດ້ວຍເອກະສານເພີ່ມເຕີມທັງໝົດ ສາມາດເຂົ້າມາເອົາໄດ້ດ້ວຍຕົນເອງ ຫຼື ສົ່ງທາງໄປສະນີ.

ມາສົ່ງດ້ວຍຕົນເອງ: ວັນຈັນ - ວັນສຸກ 8:30 ໂມງເຊົ້າ ຫາ 4 ໂມງແລງ
ພະແນກສະຫາງດ້ານການເງິນ
2315 Stockton Blvd, Suite 1P214 Sacramento, CA 95817
Patient Billing Customer Service 4900 Broadway, Suite 2600
Sacramento, CA 95820

ສົ່ງທາງໄປສະນີໄປທີ່:
UC Davis Health Patient Billing:
FA Program
PO Box 168015
Sacramento, CA 95816-9979